ຂາເຂົ້າ | ສໍານັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ
ເລກທີ: 2162
ວັນທີ: 31.5.23

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 981 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2023

## ແຈ້ງການ

ຮຽນ: ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖື. ✓

ເລື່ອງ: ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນໍາໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈໍານວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ຄໍາຮ້ອງຂໍຄວາມເປັນທໍາຂອງນາງ ວຽງເງິນ ໜ່ວຍມະນີ ສະບັບລົງວັນທີ 03 ເມສາ 2023.
- ອີງຕາມ ທິດຊີ້ນໍາ ຂອງທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນໍາວຽກງານຂົງເຂດການປົກຄອງ ແລະ ວັດທະນະທໍາ-ສັງຄົມ ຄັ້ງວັນທີ 22 ພຶດສະພາ 2023.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນໍາວຽກງານຂົງເຂດການປົກຄອງ ແລະ ວັດທະນະທໍາ-ສັງຄົມ ມາຍັງທ່ານ ຊາບດັ່ງນີ້: **ມອບໃຫ້ ອົງການປົກຄອງນະຄອນຫຼວງວຽງຈັນ ຄົ້ນຄວ້າ ແລະ ແກ້ໄຂ ໃຫ້ມີຄວາມສະຫງົບ ແລະ ຮັບປະກັນຄວາມເປັນທໍາ ແລ້ວແຈ້ງຜົນການຈັດຕັ້ງປະຕິບັດມາຍັງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

(ໄດ້ມີເອກະສານທີ່ກ່ຽວຂ້ອງ ຄັດຕິດມາພ້ອມນີ້).

ຮັກສາການແທນລັດຖະມົນຕີ,

**ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ**

ສໍານັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການ

**ຄໍາລາວັນ ຈັນທະລາວົງ**

ບ່ອນນໍາສົ່ງ

- ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ 01 ສະບັບ;
- ຄະນະ ຫສນຍ ທ່ານລະ 01 ສະບັບ;
- ກົມນິຕິກໍາ 02 ສະບັບ;
- ນາງ ວຽງເງິນ ໜ່ວຍມະນີ 01 ສະບັບ;
- ເກັບມ້ຽນ 01 ສະບັບ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນະຄອນຫຼວງວຽງຈັນ**

ຫ້ອງວ່າການ

ເລກທີ: 1013 /ຫວນວ

ວັນທີ: 8 ມິຖຸນາ 2023

# ໜັງສືທາງລັດຖະການ

**ຮຽນ:**- ທ່ານຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ;
- ທ່ານເຈົ້າເມືອງສີໂຄດຕະບອງ.

**ເລື່ອງ:** ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 981/ຫສນຍ, ລົງວັນທີ 30 ພຶດສະພາ 2023;
- ອີງຕາມ ການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ຄັ້ງວັນທີ 2 ມິຖຸນາ 2023.

ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີການຊີ້ນຳຂອງຂັ້ນເທິງມາຍັງບັນດາທ່ານ ດັ່ງນີ້:

**" ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ແລະ ເມືອງສີໂຄດຕະບອງ ຄົ້ນຄວ້າ ແລ້ວລາຍງານຄືນການນຳນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ".**

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມການຊີ້ນຳຂັ້ນເທິງນີ້ດ້ວຍ.

**ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ ຫ້ອງວ່າການ

ປອ. ໂພຄຳ ໄຊຍະສອນ

ບ່ອນສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ | 01 ສະບັບ; |
| - ຄະນະຫ້ອງວ່າການ ນວ ທ່ານລະ | 01 ສະບັບ; |
| - ກົມນິຕິກຳ, ຫສນຍ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |

ຫ້ອງວ່າການນະຄອນຫຼວງວຽງຈັນ, ຂະແໜງຄົ້ນຄວ້າສັງລວມ **doc**: 2162 5/6/2023(ມະນີບຸດ).
ໂທ (856-21) 260206; ແຟັກສ (856-21) 260206 E-mail: vtecabinet@live.com